ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເລກທີ 1466/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2026

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ກົມຄວາມປອດໄພໄຊເບີ

- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 683/ຄຈສພ, ລົງວັນທີ 10 ເມສາ 2026;
- ອີງຕາມ ການຄົ້ນຄ້ວາສະເໜີຂອງ ກົມຈັດຕັ້ງ ສະບັບເລກທີ 586 /ຈຕ, ລົງວັນທີ 04 /06 /2026.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຄວາມປອດໄພໄຊເບີ, ແນໃສ່ຈັດຕັ້ງປະຕິບັດ ວຽກງານຄວາມປອດໄບທາງໄຊເບີ ໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄວາມປອດໄພໄຊເບີ ຂຽນເປັນຕົວອັກສອນຫຍໍ້ວ່າ "ກຄຊ" ຂຽນເປັນພາສາ ອັງກິດວ່າ "Department of Cyber Security" ຂຽນຫຍໍ້ "DCS" ແມ່ນກົມໜຶ່ງ ທີ່ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ ກະຊວງ ໃນວຽກງານຄຸ້ມຄອງຄວາມປອດໄພທາງໄຊເບີ ໃນຂອບເຂດທົ່ວປະເທດ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄວາມປອດໄພໄຊເບີ ມີໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ເຊື່ອມຊຶມ ຜັນຂະຫຍາຍມະຕິຄຳສັ່ງ, ບົດແນະນຳ ແລະ ນິຕິກຳອື່ນໆ ຕາມແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ຄົ້ນຄວ້າ ສ້າງ ແລະ ປັບປຸງ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພທາງໄຊເບີ ໃຫ້ແທດເໝາະຕາມຄວາມເໝາະສົມໃນແຕ່ລະໄລຍະ;
3. ຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ລະບຽບການ, ແຜນຍຸດທະສາດ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານການພັດທະນາ ຄວາມປອດໄພໄຊເບີ;
4. ຄົ້ນຄວ້າ ສ້າງບົດສະເໜີໂຄງການ, ແຜນການ, ແຜນງານ ແລະ ໂຄງການອັນລະອຽດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
5. ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາ ສູນປະຕິບັດການຄວາມປອດໄພໄຊເບີ ແຫ່ງຊາດ ເພື່ອຮັບປະກັນ ໃຫ້ແກ່ການບໍລິການຂອງລັດຖະບານດີຈິຕອນ, ເວບໄຊຂອງລັດຖະບານ, ຂໍ້ມູນຂ່າວສານແຫ່ງຊາດ ແລະ ໂຄງລ່າງພື້ນຖານຂໍ້ມູນຂ່າວສານທີ່ສຳຄັນຂອງປະເທດ ໃຫ້ມີຄວາມປອດໄພ;
6. ຄົ້ນຄວ້າ ວິເຄາະ, ວິໄຈຂໍ້ມູນ, ເຝົ້າລະວັງ, ຕິດຕາມ, ກວດກາ, ແຈ້ງເຕືອນ, ປະເມີນຄວາມສ່ຽງ, ຕອບໂຕ້ ແລະ ແກ້ໄຂເຫດສຸກເສີນທາງລະບົບຄອມພິວເຕີ;
7. ຄົ້ນຄວ້ານຳໃຊ້ເຕັກໂນໂລຊີປັນຍາປະດິດທີ່ ກ່ຽວພັນກັບວຽກງານຄວາມປອດໄພໄຊເບີ ເຂົ້າໃນຂົງເຂດວຽກງານເສດຖະກິດດິຈິຕອນ, ລັດຖະບານດີຈິຕອນ ແລະ ສັງຄົມດິຈິຕອນ;
8. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ບັນດາຫົວໜ່ວຍ ທຸລະກິດດ້ານຄວາມປອດໄພໄຊເບີ ໃນຂອບເຂດຄວາມຮັບຜິດຊອບ ເພື່ອໃຫ້ດຳເນີນທຸລະກິດຖືກຕ້ອງ, ມີຄຸນນະພາບ ໄດ້ມາດຕະຖານ ກຳນົດມາດຕະຖານດ້ານຄວາມປອດໄພ, ສອດຄ່ອງຕາມກົດໝາຍ ແລະ ບະບຽບການ
9. ຄົ້ນຄວ້າສ້າງ, ປັບປຸງ ແລະ ເຜີຍແຜ່ມາດຕະຖານ ກ່ຽວກັບ ຄວາມປອດໄພໄຊເບີ ທີ່ລວມທັງ ຮາດແວ ແລະ ຊໍອບແວ;
10. ສ້າງລະບຽບການ ແລະ ສົ່ງເສີມ ໃຫ້ ບັນດາໂຄງລ່າງພື້ນຖານຂໍ້ມູນຂ່າວສານທີ່ສຳຄັນຂອງຊາດ ເຂົ້າມາເຊື່ອມຕໍ່ທາງດ້ານເຕັກນິກ ກັບ ລະບົບສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ ເພື່ອເຝົ້າລະວັງຄວາມປອດໄພ 24/7;
11. ກວດກາ ແລະ ຢັ້ງຢືນ ບັນດາອຸປະກອນເອເລັກໂຕຣນິກໃຫ້ໄດ້ມາດຕະຖານດ້ານຄວາມປອດໄພທາງໄຊເບີກ່ອນທີ່ຈະນຳເຂົ້າ ສປປ ລາວ;
12. ອອກໃບອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຈະດຳເດີນທຸລະກິດດ້ານຄວາມປອດໄພໄຊເບີ;
13. ອອກໃບສັ່ງມອບ ຄ່າທຳນຽມການດຳເນີນທຸລະກິດ ແລະ ການບໍລິການດ້ານຄວາມປອດໄພໄຊເບີ;
14. ຄົ້ນຄວ້າ ແລະ ຜັນຂະຫຍາຍ ນະໂຍບາຍ, ມາດຕະການການປ້ອງກັນເດັກຈາກສື່ສັງຄົມອອນລາຍ;
15. ຂຶ້ນທະບຽນ ຄວາມປອດໄພໄຊເບີ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຫ້ບໍລິການ, ແຈກຢາຍ, ສະໜອງ ແລະ ເຜີຍແຜ່ຂໍ້ມູນ ຜ່ານລະບົບອິນເຕີເນັດ ພາຍໃນ ສປປ ລາວ;
16. ສ້າງກິດຈະກຳ, ຝຶກອົບຮົມ, ໂຄສະນາ, ເຜີຍແຜ່ ບັນດານິຕິກຳ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບ ຄວາມປອດໄພໄຊເບີ ທັງສູນກາງ ແລະ ທ້ອງຖິ່ນ;

17. ຮັບແຈ້ງເຫດ, ໃຫ້ຄຳປຶກສາ ແລະ ແນະນຳວິທີປ້ອງກັນ ກ່ຽວກັບ ຄວາມປອດໄພທາງໄຊເບີ ຕາມການສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
18. ຄົ້ນຫາ, ສະໜອງຂໍ້ມູນ, ຢັ້ງຢືນຂໍ້ມູນຫຼັກຖານການກະທຳຜິດທາງໄຊເບີ ແລະ ວິໄຈຂໍ້ມູນຂ່າວສານຜ່ານທາງອອນລາຍ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ ດຳເນີນຄະດີຕາມລະບຽບກົດໝາຍ;
19. ຄົ້ນຄວ້າ, ພັດທະນາການນຳໃຊ້ ຊອບແວ, ຮາດແວ ແລະ ລະບົບເຕັກໂນໂລຊີ ກ່ຽວກັບ ຄວາມປອດໄພທາງໄຊເບີ;
20. ຄົ້ນຄວ້າ ແລະ ປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ ໃນການສ້າງ ແລະ ພັດທະນາ ຫຼັກສູດຝຶກອົບຮົມ ໃຫ້ຄວາມຮູ້ດ້ານຄວາມປອດໄພທາງໄຊເບີ;
21. ຕິດຕາມ, ກວດກາ, ເກັບກຳ, ສັງລວມ ແລະ ລາຍງານ ການນຳໃຊ້ຂໍ້ມູນ-ຂ່າວສານ ຜ່ານອິນເຕີເນັດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
22. ພົວພັນ, ປະສານງານ ແລະ ຮ່ວມມື ວຽກງານຄວາມປອດໄພທາງໄຊເບີ ກັບ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ, ພາກພື້ນ ແລະ ສາກົນ;
23. ສ້າງປຶ້ມເກັບກຳ ສະຖິຕິ ການໂຈມຕີທາງໄຊເບີ, ການກະທຳຜິດຜ່ານທາງສື່ສັງຄົມອອນລາຍ ກ່ຽວກັບ ການນຳໃຊ້ອິນເຕີເນັດ ທີ່ເກີດຂຶ້ນ ຢູ່ພາຍໃນ ແລະ ກ່ຽວຂ້ອງກັບ ຕ່າງປະເທດ;
24. ຄຸ້ມຄອງການຈັດຕັ້ງ, ພະນັກງານ, ຂຶ້ນແຜນບຳລຸງກໍ່ສ້າງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ;
25. ຂຶ້ນແຜນຈັດຊື້ ແລະ ສ້ອມແປງຊັບສິນບັນດາທີ່ ຮັບໃຊ້ກິດຈັກບໍລິຫານ ແລະ ລະບົບພື້ນຖານໂຄງລ່າງ ປະຈຳປີຂອງກົມ;
26. ເກັບກຳ, ບັນທຶກ ສະເໜີຢັ້ງຢືນຜົນງານ ຕໍ່ຜູ້ທີ່ມີຜົນງານ ກ່ຽວກັບ ວຽກງານຄວາມປອດໄພໄຊເບີ ເພື່ອສະເໜີຂັ້ນເທິງພິຈາລະນາ ໃບກຽດຕິຄຸນ, ຍ້ອງຍໍຜົນງານ ຕາມຄວາມເໝາະສົມ;
27. ສ້າງແຜນພັດທະນາ ແລະ ແຜນການເຄື່ອນໄຫວວຽກງານ ປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ, ກາງສະໄໝ ແລະ ທ້າຍສະໄໝ ເພື່ອສະເໜີຕໍ່ ຄະນະນຳກະຊວງ;
28. ສະຫຼຸບ, ລາຍງານ ວຽກງານຂອງກົມຄວາມປອດໄພໄຊເບີ ໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
29. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະນຳກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 4 ຂອບເຂດສິດ**

ກົມຄວາມປອດໄພໄຊເບີ ມີສິດດັ່ງນີ້:

1. ສະເໜີສ້າງ, ປັບປຸງ ຫຼື ລົບລ້າງ ນິຕິກຳທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ໃຫ້ຂັ້ນເທິງພິຈາລະນາ;
2. ສະເໜີແຜນການ, ແຜນງານໂຄງການ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ໃຫ້ແທດເໝາະກັບ ແຜນຍຸດທະສາດຄວາມປອດໄພໄຊເບີແຫ່ງຊາດ ຮອດປີ 2035, ວິໄສທັດການພັດທະນາເສດຖະກິດດີຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040) ແລະ ຍຸດທະສາດການພັດທະນາເສດຖະກິດດີຈິຕອນແຫ່ງຊາດໄລຍະ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດີຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025) ໃຫ້ເພື່ອ ຄະນະນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາຮັບຮອງ ແລະ ອະນຸມັດ;
3. ສະເໜີເຂົ້າເປັນສະມາຊິກຂອງ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ ຕາມການເຫັນດີຂອງ ຄະນະນຳກະຊວງ;
4. ສະເໜີນຳໃຊ້ລາຍຮັບວິຊາການ ຈາກການຕິດຕາມ, ເຝົ້າລະວັງ, ກວດສອບລະບົບ, ປະເມີນຄວາມສ່ຽງລະບົບ, ເກັບຄ່າທຳນຽມການອອກໃບອະນຸຍາດການດຳເນີນທຸລະກິດດ້ານຄວາມປອດໄພໄຊເບີ, ການຂຶ້ນ

ທະບຽນຄວາມປອດໄພໄຊເບີ ແລະ ອື່ນໆ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພໄຊເບີ ຕາມຄວາມເໝາະສົມໃນແຕ່ລະໄລຍະ;

5. ຕິດຕາມບັນຊີເປົ້າໝາຍ, ສ້າງບັນຊີນາມແຝງ ໃນການຕອບໂຕ້ເຫດເຫດສຸກເສີນ, ຕອບໂຕ້ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນ ສື່ສັງຄົມອອນລາຍ ໃຫ້ມີຄວາມສະຫງົບ ແລະ ປອດໄພ;
6. ສະເໜີເຂົ້າຮ່ວມປະຊຸມ, ສໍາມະນາ, ຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງ ປະເທດທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພທາງໄຊເບີ;
7. ຂຶ້ນແຜນງົບປະມານລາຍຈ່າຍປະຈໍາປີຂອງກົມ ກ່ຽວກັບ ຈັດຝຶກອົບຮົມ, ກອງປະຊຸມ, ສໍາມະນາ ແລະ ແຜນເຄື່ອນໄຫວວຽກງານທາງການ ທັງພາຍໃນ ແລະ ຕ່າງປະເທດ;
8. ສະເໜີຈັດຊື້ ແລະ ສ້ອມແປງ ອຸປະກອນລະບົບພື້ນຖານໂຄງລ່າງ ຂອງກົມ;
9. ສະເໜີ ສ້າງຕັ້ງ, ປັບປຸງ, ຍຸບເລີກກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ແລະ ຊັບຊ້ອນ ພະນັກງານ ຂອງກົມຕາມສະພາບ ເພື່ອໃຫ້ສອດຄ່ອງກັບ ວຽກງານຄວາມປອດໄພທາງໄຊເບີ ຕາມແຕ່ລະໄລຍະ;
10. ສະເໜີ ນະໂຍບາຍ, ເລື່ອນຊັ້ນ-ຂັ້ນ, ບໍາລຸງ, ກໍ່ສ້າງ ພະນັກງານ ແລະ ປະຕິບັດວິໄນ ຕາມລະບຽບການ;
11. ກວດກາ, ຄົ້ນຫາ, ສະໜອງຂໍ້ມູນ, ຢັ້ງຢືນຂໍ້ມູນຫຼັກຖານການກະທໍາຜິດທາງໄຊເບີ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ;
12. ສະເໜີ ມາດຕະການ ແລະ ວິທີການແກ້ໄຂ ກ່ຽວກັບ ວຽກງານຄວາມປອດໄພໄຊເບີ ທີ່ລະເມີດ ຕໍ່ ກົດໝາຍ ແລະ ລະບຽບການ;
13. ກວດກາ, ກວດສອບ ຕີລາຄາ ເພື່ອອອກ, ຕໍ່, ກ່າວເຕືອນ, ໂຈະ ຫຼື ຍຸບເລີກ ບັນດາ ທຸລະກິດ ທີ່ກ່ຽວກັບວຽກງານຄວາມປອດໄພໄຊເບີ;
14. ສະເໜີຄົ້ນຄວ້າ ແລະ ຜັນຂະຫຍາຍ ນະໂຍບາຍ, ມາດຕະການການປ້ອງກັນເດັກຈາກສື່ສັງຄົມອອນລາຍ;
15. ສະເໜີ ເຊັນບັນດາບົດບັນທຶກຄວາມເຂົ້າໃຈ, ສັນຍາ ຮ່ວມກັບ ອົງການຈັດຕັ້ງ ທັງພາຍໃນ, ພາກພື້ນ ແລະສາກົນ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ;
16. ອອກໃບອະນຸຍາດ, ຢັ້ງຢືນການດໍາເນີນທຸລະກິດ ກ່ຽວກັບ ຄວາມປອດໄພໄຊເບີ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ໃຫ້ການບໍລິການ;
17. ສະເໜີຈັດ ແລະ ເຂົ້າຮ່ວມ ກອງປະຊຸມ, ສໍາມະນາ, ແລກປ່ຽນ ຂໍ້ມູນ-ຂ່າວສານ ແລະ ຝຶກອົບຮົມ, ຝຶກຊ້ອມຮົບມື ຕົວຈິງ ກ່ຽວກັບ ວຽກງານຄວາມປອດໄພທາງໄຊເບີ ທັງພາຍໃນ ແລະ ຕ່າງປະເທດ;
18. ຂຶ້ນແຜນງົບປະມານລວມຂອງກົມ ກ່ຽວກັບ ຈັດຝຶກອົບຮົມ, ກອງປະຊຸມ, ສໍາມະນາ ແລະ ແຜນເຄື່ອນໄຫວວຽກງານທາງການ ທັງພາຍໃນ ແລະ ຕ່າງປະເທດ;
19. ຂຶ້ນແຜນຈັດຊື້, ຄຸ້ມຄອງ ແລະ ສ້ອມແປງຊັບສົມບັດທີ່ ຮັບໃຊ້ກົງຈັກບໍລິຫານ ແລະ ລະບົບພື້ນຖານໂຄງລ່າງ ປະຈໍາປີຂອງກົມ;
20. ນໍາໃຊ້ໂລໂກ ລາວເຊີດ "LaoCERT" ເຂົ້າໃນວຽກງານການສ້າງກິດຈະກໍາ, ການເຜີຍແຜ່ຂໍ້ມູນຂ່າວສານ, ການໃຫ້ຄວາມຮູ້, ການພິວພັນ, ການແຈ້ງເຕືອນ ແລະ ຕອບໂຕ້ເຫດສຸກເສີນ ທີ່ເກີດຂຶ້ນກັບ ລະບົບຄອມພິວເຕີ;
21. ເຂົ້າຮ່ວມ ກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມ ວຽກງານຄວາມປອດໄພໄຊເບີ ຢູ່ພາຍໃນ ແລະຕ່າງປະເທດ;
22. ເຂົ້າຮ່ວມໃນການສ້າງ ແລະ ປັບປຸງ ບັນດານິຕິກໍາ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພໄຊເບີ;
23. ສະຫຼຸບ ສັງລວມລາຍງານ ປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນຜ່ານສື່ສັງຄົມອອນລາຍ ເປັນລາຍວັນ, ອາທິດ, ປະຈໍາ 6 ເດືອນ ແລະ ປະຈໍາປີ ໃຫ້ ຄະນະຄຸ້ມຄອງອິນເຕີເນັດແຫ່ງຊາດ;
24. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງ ຄະນະນໍາກະຊວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມຄວາມປອດໄພໄຊເບີ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກ ສັງລວມ ແລະ ຮ່ວມມື (General Affairs and Cooperation Division)
2. ພະແນກ ຄົ້ນຄ້ວາ ແລະ ພັດທະນາ (Research and Development Division)
3. ພະແນກ ຢັ້ງຢືນມາດຕະຖານ ແລະ ນະໂຍບາຍ (Policy and standard Division)
4. ພະແນກ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ (Lao Computer Emergency Response Team Division);
5. ພະແນກ ວິໄຈຂໍ້ມູນຂ່າວສານຜ່ານອິນເຕີເນັດ (Content Analysis Division);
6. ພະແນກ ປະຕິບັດການຄວາມປອດໄພໄຊເບີ (Security Operation Center).

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຄວາມປອດໄພໄຊເບີ ມີໂຄງປະກອບ ບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີຜູ້ຊີ້ນຳວຽກງານ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງກົມ.
   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ;
2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານ ທີ່ຕົນຊີ້ນຳ; ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ. ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງ ພະແນກ ສັງລວມ ແລະ ຮ່ວມມື (General Affairs and Cooperation Division)**

ພະແນກ ສັງລວມ ແລະ ຮ່ວມມື ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ນິຕິກຳ, ລະບຽບການ ແລະຄຳແນະນຳ ຕ່າງໆ ຂອງຂັ້ນເທິງ ເພື່ອນຳມາເຜີຍແຜ່ ເຊື່ອມຊຶມ ໃຫ້ພະນັກງານ-ລັດຖະກອນ ພາຍໃນກົມ ແລະ ພ້ອມທັງຈັດຕັ້ງປະຕິບັດ;
2. ເປັນເສນາທິການໃຫ້ແກ່ຄະນະກົມໃນການຕິດຕໍ່ພົວພັນ, ຮ່ວມມື, ຮ່າງສັນຍາ, ເຮັດບົດບັນທຶກການຮ່ວມມື ແລະ ຂໍ້ຜູກພັນຕ່າງໆ ຮ່ວມກັບ ບັນດາອົງການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ, ພາກພື້ນ ແລະ ສາກົນ;
3. ເຂົ້າຮ່ວມຄົ້ນຄວ້າ ສ້າງ, ປັບປຸງ, ດັດແກ້ ບັນດານິຕິກຳຕ່າງໆ ທີ່ ກ່ຽວກັບ ວຽກງານຄວາມປອດໄພໄຊເບີ;
4. ເກັບກຳ, ຄຸ້ມຄອງສະຖິຕິ, ຊີວະປະຫວັດພະນັກງານ ແລະ ການປະເມີນຜົນງານ ກ່ຽວກັບ ວຽກງານພະນັກງານ-ລັດຖະກອນ ຂອງກົມ;

5. ຄຸ້ມຄອງ, ເກັບກໍາ, ເກັບມ້ຽນ, ຮຽບຮຽງ ແລະຮັກສາບັນດາເອກະສານວຽກງານຂາເຂົ້າ-ຂາອອກ, ກວດກາ ຄວາມຖືກຕ້ອງຂອງເອກະສານ ກ່ອນຈະນໍາສະເໜີຄະນະກົມ ມີຄໍາເຫັນ ເພື່ອແຈກຢາຍເອກະສານແບບເຈ້ຍ ແລະ ແບບເອເລັກໂຕຼນິກ ແລະ ເພື່ອສົ່ງອອກໄປຫາພາກສ່ວນອື່ນໆທີ່ກ່ຽວຂ້ອງ;
6. ຄົ້ນຄວ້າ ກໍານົດຕໍາແໜ່ງງານຂອງກົມ ຄັດເລືອກ ແລະ ພິຈາລະນາໃນການສະເໜີຍ້ອງຍໍ ພະນັກງານພາຍໃນ ກົມ ເພື່ອນໍາສະເໜີ ຄະນະກົມພິຈາລະນາ ໃນແຕ່ລະໄລຍະ;
7. ຄົ້ນຄວ້າກໍານົດມາດຖານເງື່ອນໄຂ ແລະ ສ້າງແຜນຍົກລະດັບ, ບໍາລຸງກໍ່ສ້າງ ພະນັກງານ ເພື່ອພັດທະນາຄວາມ ຮູ້ຄວາມສາມາດ ໃນໄລຍະສັ້ນ, ກາງ ແລະ ໄລຍະຍາວ ພາຍໃນກົມ;
8. ຄົ້ນຄວ້າ ແລະ ນໍາສະເໜີຂັ້ນເທິງ ກ່ຽວກັບ ການປະຕິບັດນະໂຍບາຍຕ່າງໆ ແລະ ການປະຕິບັດ ລະບຽບວິໄນ ຂອງ ພະນັກງານ-ລັດຖະກອນ ຂອງ ກົມ;
9. ເກັບກໍາ, ເກັບມ້ຽນ, ຮັກສາຕາປະທັບ, ກາຊື່ຂອງຄະນະກົມ ແລະ ການນໍາໃຊ້ຕາປະທັບພາຍໃນກົມ ໃຫ້ ຖືກຕ້ອງຕາມລະບຽບການ, ພ້ອມທັງຮັກສາຄວາມລັບທາງລັດຖະການ;
10. ສະເໜີແຜນ ຄຸ້ມຄອງ, ບໍາລຸງຮັກສາ, ຂຶ້ນບັນຊີ, ຕິດຕາມກວດກາ ເຄື່ອງມື, ອຸປະກອນເຕັກນິກ, ພາຫະນະ ຮັບໃຊ້, ຊັບສົມບັດ ແລະ ຊັບສິນ ສ່ວນລວມທັງໝົດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ;
11. ສັງລວມ ແລະ ສະເໜີແຜນງົບປະມານຮັບໃຊ້ປະຈໍາປີ, ແຜນງົບປະມານໃນການເຄື່ອນໄຫວວຽກງານ ຂອງ ກົມ ພ້ອມທັງສະຫຼຸບລາຍງານຂັ້ນເທິງ;
12. ຄຸ້ມຄອງ ຕິດຕາມ ແລະ ນໍາໃຊ້ງົບປະມານ-ການເງິນ, ລົງບັນຊີລາຍຮັບ-ລາຍຈ່າຍ, ຈ່າຍ ປະຈໍາ 03 ເດືອນ, 06 ເດືອນ ແລະ ປະຈໍາປີ;
13. ສະຫຼຸບ ຕີລາຄາ ຕິດຕາມ ກວດກາ ປະເມີນຜົນ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດວຽກງານຂອງ ບັນດາພະແນກການ ພາຍໃນກົມ ເປັນແຕ່ລະໄລຍະ ເພື່ອໃຫ້ແທດເໝາະ ກັບທິດທາງ ແລະ ແຜນການລວມ ຂອງກົມວາງອອກ;
14. ກະກຽມກອງປະຊຸມຕ່າງໆ, ວຽກງານພິທີການ ແລະ ເຮັດບົດບັນທຶກກອງປະຊຸມຂອງກົມ;
15. ຄົ້ນຄວ້າ ແລະ ກະກຽມເນື້ອໃນເອກະສານຕ່າງໆ ໃຫ້ຄະນະນໍາກະຊວງ ແລະ ຄະນະກົມ ເພື່ອເປັນຂໍ້ມູນ ໃນ ການເຂົ້າຮ່ວມກອງປະຊຸມ ພາຍໃນ, ພາກພື້ນ ແລະ ສາກົນ ດ້ານວຽກງານຄວາມປອດໄພທາງໄຊເບີ;
16. ເປັນໃຈກາງປະສານສົມທົບກັບ ບັນດາ ພະແນກການພາຍໃນກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ ແຜນລາຍຮັບ-ລາຍຈ່າຍ ຂອງກົມ;
17. ເປັນໃຈກາງ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ວຽກງານ ຂອງກົມ ຢ່າງມີປະສິດທິຜົນດີ;
18. ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນແຜນຈັດຊື້ອຸປະກອນ ວຽກງານວິຊາສະເພາະ, ສ້ອມແປງຊັບ ສົມບັດຄົງທີ່ ຮັບໃຊ້ກົງຈັກບໍລິຫານ ແລະ ລະບົບພື້ນຖານໂຄງລ່າງ ປະຈໍາປີຂອງກົມ;
19. ປະສານສົມທົບ ກັບ ກົມແຜນການ ແລະ ການເງິນ ກ່ຽວກັບ ການສະຫຼຸບລາຍຮັບ-ລາຍຈ່າຍ, ເກັບຄ່າທໍາ ທຽມ ແລະ ຄ່າບໍລິການ;
20. ປະສານງານ ແລະ ຄົ້ນຄ້ວາປະກອບຄໍາເຫັນ ກ່ຽວກັບ ເອກະສານປົ່ນອ້ອມວຽກງານຄວາມປອດໄພໄຊເບີ, ອາຊຽນ-ຍີ່ປຸ່ນ, ອາຊຽນ-ຈີນ, ອາຊຽນ-ສ.ເກົາຫຼີ, ອາຊຽນ-ອິນເດຍ, ອາຊຽນ-ລັດເຊຍ, ອາຊຽນ-ອາເມລິກາ, ອາຊຽນ-ອົດສະຕຣາລີ, ອາຊຽນ-ການາດາ ແລະ ອື່ນໆ;
21. ປະສານງານພົວພັນ ກັບ ບັນດາຄູ່ຮ່ວມມືສອງຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາທຶນ ຊ່ວຍເຫຼືອທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພໄຊເບີ;
22. ປະສານງານພົວພັນ ກັບ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງກັບ ວຽກງານຄວາມປອດໄພໄຊເບີ ເຊັ່ນ: APCERT, JICA, KOICA, ITU, EU, APT, FIRST, CAMP ແລະ ອົງການຈັດຕັ້ງສາກົນອື່ນໆ;

23. ກະກຽມກອງປະຊຸມຕ່າງໆ ວຽກງານພິທີການ ແລະ ເຮັດບົດບັນທຶກກອງປະຊຸມສ່ອງແສງປະຈໍາອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ ຂອງກົມ;
24. ຕິດຕາມ ແລະ ຄົ້ນຄວ້າປະກອບຄໍາເຫັນບັນດາເອກະສານໃນກອບວຽກອາຊຽນ, ADGSOM, ANSAC, ACCC, Cyber Norms, ASEAN Regional CERT ແລະ ASEAN Anti Scam;
25. ພົວພັນ ແລະ ປະສານງານ ກັບພາກສ່ວນກ່ຽວຂ້ອງທັງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອສະເໜີນໍາສົ່ງ ພະນັກງານ ເຂົ້າຮ່ວມກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມ;
26. ສັງລວມ, ເກັບກໍາ ແລະ ສະເໜີດັດແກ້ ຊັ້ນ-ຂັ້ນ ເງິນເດືອນ, ຄິດໄລ່ແຮງງານ-ປະຈໍາການເຝົ້າຍາມລະບົບ 24/7 ຂອງ ພະນັກງານ-ລັດຖະກອນ ພາຍໃນກົມ;
27. ສັງລວມ ແລະ ສະເໜີແຜນງົບປະມານຮັບໃຊ້ວຽກງານປະຈໍາປີ, ແຜນງົບປະມານໃນການເຄື່ອນໄຫວວຽກ ງານຂອງກົມ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງສະຫຼຸບລາຍງານຂັ້ນເທິງ ໃນແຕ່ລະໄລຍະ;
28. ສັງລວມ ແລະ ເກັບກໍາການເຄື່ອນໄຫວວຽກງານຂອງກົມ ໃນແຕ່ລະໄລຍະ;
29. ຂື້ນແຜນງົບປະມານການເຄື່ອນໄຫວວຽກງານອາຊຽນ ທີ່ຕິດພັນກັບວຽກງານຄວາມປອດໄພໄຊເບີ ໃຫ້ພະ ນັກງານ ແລະ ຄະນະນໍາ ແຕ່ລະປີ;
30. ສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງເຕັກໂນໂລຊີ ແລະ ການສື່ສານ ປະຈໍາງວດ 03 ເດືອນ, 06 ເດືອນ, 09 ເດືອນ, ປີ, ກາງສະໄໝ, ທ້າຍສະໄໝ ແລະ ແຜນການ 05 ປີ;
31. ຄົ້ນຄວ້າ, ນໍາສະເໜີ ສ້າງບັນດາໂຄງການລົງທຶນລັດ, ໂຄງການກູ້ຢືມ ແລະ ໂຄງການຊ່ວຍເຫຼືອ ຈາກ ພາຍໃນ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພທາງໄຊເບີ;
32. ຄົ້ນຄວ້າສ້າງໂຄງການ, ແຜນການ ແລະ ແຜນງານອັນລະອຽດຂອງກົມ ເພື່ອໃຫ້ສອດຄ່ອງ ກັບແຜນຍຸດທະ ສາດການພັດທະນາຄວາມປອດໄພໄຊເບີແຫ່ງຊາດ ຮອດປີ 2035 ແລະ ແຜນພັດທະນາເສດຖະກິດດິຈິຕອນ ໃນແຕ່ລະໄລຍະ;
33. ສະຫຼຸບ ລາຍງານແຜນການ, ແຜນງານ, ໂຄງການ ກ່ຽວກັບ ຄວາມປອດໄພໄຊເບີ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຕາມແຕ່ລະໄລຍະ;
34. ຈັດຕັ້ງຜັນຂະຫຍາຍບັນດາແຜນການ, ແຜນງານ ແລະ ກິດຈະກໍາຂອງແຜນພັດທະນາຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ທີ່ຕິດພັນກັບວຽກງານຄວາມປອດໄພໄຊເບີ;
35. ສະຫຼຸບສັງລວມວຽກງານຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ ດ້ານວຽກງານຄວາມປອດໄພໄຊເບີ;
36. ສະຫລຸບ ແລະ ສັງລວມ ການຈັດຕັ້ງປະຕິບັດ ວຽກງານເຄື່ອນໄຫວ ຂອງກົມ ປະຈໍາອາທິດ, ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈໍາປີ ຂອງກົມ;
37. ຄົ້ນຄວ້າ ແລະ ເກັບກໍາສະຖິຕິ ວຽກງານເຂົ້າຮ່ວມຝຶກອົບຮົມ ແລະ ສໍາມະນາຕ່າງໆ ຢູ່ ພາຍໃນ ແລະ ຕ່າງປະເທດ;
38. ເຂົ້າຮ່ວມ ຝຶກອົບຮົມ, ກອງປະຊຸມ ສໍາມະນາຕ່າງໆ ດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການ ເຫັນດີຂອງຄະນະກົມ;
39. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ຂອງພະແນກ ຄົ້ນຄ້ວາ ແລະ ພັດທະນາ (Research and Development Division)**

ພະແນກ ຄົ້ນຄ້ວາ ແລະ ພັດທະນາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ວິໄຈ, ທົດລອງ, ປະເມີນ ໂປຣແກຣມປະສົງຮ້າຍ ແລະ ຊ່ອງໂຫວ່ຕ່າງໆ ທີ່ມີຜົນກະທົບ ທາງ ລະບົບຄອມພິວເຕີ ເພື່ອແຈ້ງເຕືອນໃຫ້ສັງຄົມ;

2. ຄົ້ນຄວ້າ ບັນດານະວັດຕະກໍາ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນ-ຂ່າວສານ ກ່ຽວກັບ ຄວາມປອດໄພທາງໄຊເບີ ເພື່ອເຜີຍແຜ່ຄວາມຮູ້ໃຫ້ສັງຄົມ;
3. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ປຶ້ມຄູ່ມື, ບົດນໍາສະເໜີ, ຫຼັກສູດ ຝຶກອົບຮົມ ແລະ ສໍາມະນາ ວຽກງານຮັກສາຄວາມປອດໄພທາງໄຊເບີ;
4. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ແຜ່ນໂຄສະນາ, ສື່ສິ່ງພິມ, ວີດີໂອ ແລະ ອື່ນໆ ກ່ຽວກັບ ວຽກງານຮັກສາຄວາມປອດໄພທາງໄຊເບີ;
5. ຄົ້ນຄວ້າ ແລະ ພັດທະນາ ລະບົບເຕັກໂນໂລຊີສະເພາະ ເພື່ອນໍາໃຊ້ເຂົ້າໃນວຽກງານຄວາມປອດໄພທາງໄຊເບີ;
6. ສ້າງກິດຈະກໍາ, ຝຶກອົບຮົມ, ໂຄສະນາ, ເຜີຍແຜ່ ບັນດານິຕິກໍາ, ຂໍ້ມູນ-ຂ່າວສານ ຄວາມປອດໄພທາງໄຊເບີ;
7. ໃຫ້ຄໍາປຶກສາ ໃນການສ້າງ ແລະ ພັດທະນາ ເວັບໄຊເວີ, ເມວເຊີເວີ ແລະ ແອັບພິເຄຊັນ ໃຫ້ມີຄວາມປອດໄພ;
8. ພັດທະນາ, ປັບປຸງ ແລະ ຄຸ້ມຄອງ, ເວບໄຊ, ອີເມວ, ແອັບພິເຄຊັນ ຂອງກົມຄວາມປອດໄພໄຊເບີ;
9. ສ້າງ ແລະ ປັບປຸງ ແອັບພິເຄຊັນ, ໂປຣແກຣມ ແລະ ລະບົບແພລັດຟອມອື່ນໆ ທີ່ກ່ຽວກັບວຽກງານຮັກສາຄວາມປອດໄພທາງໄຊເບີ;
10. ຄຸ້ມຄອງ, ຕິດຕາມ, ກວດກາ, ບໍາລຸງຮັກສາ ແລະ ການນໍາໃຊ້ ຫ້ອງທົດລອງ ຂອງກົມຄວາມປອດໄພໄຊເບີ;
11. ສ້າງປຶ້ມ ສະຖິຕິ ການບຸກລຸກ ໂຈມຕີ ທາງໄຊເບີ ຢູ່ ພາຍໃນປະເທດ ປະຈໍາປີ;
12. ສະຫຼຸບການເຄື່ອນໄຫວວຽກງານ ຂອງພະແນກ ປະຈໍາເດືອນ, ງວດ ແລະ ປີ;
13. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ຂອງ ພະແນກຢັ້ງຢືນມາດຕະຖານ ແລະ ນະໂຍບາຍ (Policy and standard Division)**

ພະແນກຢັ້ງຢືນມາດຕະຖານ ແລະ ນະໂຍບາຍ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ຍຸດທະສາດ, ກົດໝາຍ, ມາດຕະຖານ, ມາດຕະການປົກປ້ອງ-ປ້ອງກັນ ຄວາມປອດໄພໂຄງລ່າງພື້ນຖານເຕັກໂນໂລຊີຂໍ້ມູນຂ່າວສານ/ດີຈີຕອນ;
2. ຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດ ດໍາເນີນທຸລະກິດ ກ່ຽວກັບ ຄວາມປອດໄພໄຊເບີ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ໃຫ້ການບໍລິການ;
3. ຢັ້ງຢືນມາດຕະຖານຄວາມປອດໄພຂອງລະບົບ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ, ເຄືອຂ່າຍຄອມພິວເຕີ, ໂຄງລ່າງພື້ນຖານເຕັກໂນໂລຊີຂໍ້ມູນຂ່າວສານ, ລະບົບຄວບຄຸມ, ອຸປະກອນເຊື່ອມຕໍ່, ແອັບພຣິເຄຊັນ ແລະ ກິດຈະກໍາທາງອອນລາຍທັງໝົດ;
4. ເກັບຄ່າທໍານຽມໃນການຂຶ້ນທະບຽນ ອອກໃບອະນຸຍາດ ດໍາເນີນທຸລະກິດຄວາມປອດໄພໄຊເບີ;
5. ຄົ້ນຄວ້າ ແລະ ນໍາໃຊ້ ບັນດາມາດຕະຖານຂອງສາກົນເຊັ່ນ: ISO/IEC27001, NIST, GDPR ແລະ ອື່ນໆ ເພື່ອມາປັບໃຊ້ພາຍໃນປະເທດ;
6. ສ້າງ ແລະ ຄຸ້ມຄອງ ລະບົບເກັບຂໍ້ມູນໃບອະນຸຍາດ, ໃບຢັ້ງຢືນ, ໃບປະເມີນ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ທັງພາກລັດ ແລະ ເອກະຊົນ ທີ່ດໍາເນີນທຸລະກິດ ດ້ານຄວາມປອດໄພໄຊເບີ;
7. ປະສານງານກັບບັນດາ ກະຊວງ, ອົງການ ແລະ ບໍລິສັດຕ່າງໆ ເພື່ອໃຫ້ຄໍາປຶກສາ ແລະ ຊີ້ນໍາການຈັດຕັ້ງເຜີຍແຜ່ ແລະ ຜັນຂະຫຍາຍນະໂຍບາຍຄວາມປອດໄພໄຊເບີ ໃຫ້ແກ່ສັງຄົມ ແລະ ອົງກອນທີ່ກ່ຽວຂ້ອງໃຫ້ເຂົ້າໃຈຢ່າງຖືກຕ້ອງ;
8. ເຂົ້າຮ່ວມກອງປະຊຸມ, ເຈລະຈາ ແລະ ການຮ່ວມມື ລະຫວ່າງ ປະເທດ ກ່ຽວກັບ ຫົວຂໍ້ດ້ານນະໂຍບາຍ ແລະ ມາດຕະຖານຄວາມປອດໄພໄຊເບີ;
9. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາຄວາມປອດໄພໄຊເບີແຫ່ງຊາດ ຮອດປີ 2035;

10. ສ້າງແຜນຈັດຕັ້ງປະຕິບັດ, ຕິດຕາມ ແລະ ໂຄສະນາເຜີຍແຜ່ຍຸດທະສາດ ການພັດທະນາຄວາມປອດໄພໄຊເບີ ແຫ່ງຊາດ ຮອດປີ 2035 ໃຫ້ສັງຄົມຮັບຮູ້;
11. ສະຫຼຸບການເຄື່ອນໄຫວວຽກງານ ຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
12. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງ ພະແນກ ຕອບໂຕ້ເຫດສຸກເສີນທາງຄອມພິວເຕີ (Lao Computer Emergency Response Team Division)**

ພະແນກຕອບໂຕ້ເຫດສຸກເສີນທາງຄອມພິວເຕີ ມີໜ້າທີ່ດັ່ງນີ້:

1. ຮັບແຈ້ງເຫດສຸກເສີນ, ແຈ້ງເຕືອນໄພຄຸກຄາມທາງໄຊເບີ, ໃຫ້ຄຳປຶກສາດ້ານວິຊາການ, ແນະນຳ ວິທີການປ້ອງກັນ, ກູ້ລະບົບຄອມພິວເຕີທີ່ຖືກທຳລາຍ, ລະບົບຖືກເຈາະ ແລະ ແກ້ໄຂບັນຫາ ໃຫ້ສາມາດກັບມາເຮັດວຽກໄດ້ປົກກະຕິ;
2. ກວດສອບ, ກວດກາ ແລະ ປະເມີນຄວາມສ່ຽງຊ່ອງໂຫວ່ຂອງ ລະບົບເວັບເຊີເວີ, ເມວເຊີເວີ, ເວັບໄຊ, ແອັບພິເຄຊັນ, ຖານຂໍ້ມູນ, ເຄືອຂ່າຍຄອມພິວເຕີ, ລະບົບປະຕິບັດການ (Operating system) ແລະ ອື່ນໆ;
3. ຄົ້ນຄວ້າ ແລະ ປັບປຸງ ລະບຽບການ ກ່ຽວກັບ ມາດຕະການ ການຕອບໂຕ້ເຫດສຸກເສີນທາງລະບົບ ຄອມພິວເຕີ ແລະ ມາດຕະການຮັກຄວາມປອດໄພ ເຕັກໂນໂລຊີສື່ສານ ຂໍ້ມູນຂ່າວສານ;
4. ຄຸ້ມຄອງ, ຕິດຕາມ, ກວດກາ, ບຳລຸງຮັກສາ ລະບົບພື້ນຖານໂຄງລ່າງຂອງກົມຄວາມປອດໄພໄຊເບີ ເປັນຕົ້ນ: ເວັບໄຊ, ອີເມວ, ເຊີເວີ, ເຄືອຂ່າຍໄຮ້ສາຍ, ໃບຮັບຮອງຄວາມປອດໄພ (SSL) ຂອງຟາຍວໍ (UTM) ແລະ ຟາຍວໍເວັບ (WAF), ລາຍເຊັນຂອງອຸປະກອນ (License), ລະບົບເຊື່ອມໂຍງຂອງເຄືອຂ່າຍ ແລະ ອື່ນໆ;
5. ຄົ້ນຫາ, ສະໜອງ ແລະ ຢັ້ງຢືນຂໍ້ມູນຫຼັກຖານ ການກະທຳຜິດທາງໄຊເບີ ໃຫ້ເຈົ້າໜ້າທີ່ ຕຳຫຼວດ ແລະ ພາກສ່ວນກ່ຽວຂ້ອງ ຕາມການສະເໜີ;
6. ສ້າງກິດຈະກຳ, ຝຶກອົບຮົມສຳມະນາ ແລະ ການຝຶກຊ້ອມເຮັດຕົວຈິງ ການຕອບໂຕ້ເຫດສຸກເສີນທາງໄຊເບີ;
7. ຈັດກິດຈະກຳ ການແຂ່ງຂັນຄວາມປອດໄພໄຊເບີ (Capture the flag) ປະຈຳປີ ຮ່ວມກັບ ພາກທຸລະກິດ ພາຍໃນ ແລະ ຕ່າງປະເທດ ເພື່ອຄັດເລືອກເອົາທີມ ທີ່ຊະນະເລີດ ໄປແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ;
8. ພົວພັນປະສານງານ ກັບ ໜ່ວຍງານຮັກສາຄວາມປອດໄພ (CSIRT) ຢູ່ພາຍໃນ ແລະ ຕ່າງປະເທດ ໃນການແກ້ໄຂເຫດສຸກເສີນທາງຄອມພິວເຕີ;
9. ເຂົ້າຮ່ວມ ຝຶກຊ້ອມທັກສະການຮັບມື, ຮັບແຈ້ງ ແລະ ແກ້ໄຂເຫດສຸກເສີນ ປະຈຳປີ ທີ່ທາງ ອາຊຽນ ແລະ ສາກົນຈັດຂຶ້ນ;
10. ສືບຕໍ່ນຳໃຊ້ ໂລໂກລາວເຊີດ "LaoCERT" ເຂົ້າໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານດ້ານຄວາມປອດໄພທາງໄຊເບີ;
11. ສັງລວມ ບັນດາສະຖິຕິໄພຄຸກຄາມ ທີ່ເກີດຂຶ້ນທາງໄຊເບີ ຢູ່ພາຍໃນປະເທດ ປະຈຳເດືອນ, ໄຕມາດ, 06 ເດືອນ ແລະ ປະຈຳປີ;
12. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
13. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ຂອງພະແນກວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ (Content Analysis Division)**

ພະແນກວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ມີໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ສ້າງ ແລະ ປັບປຸງ ບັນດານິຕິກຳທີ່ກ່ຽວຂ້ອງ ກັບຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສື່ສັງຄົມອອນລາຍ ແລະ ແພັດຟອມອື່ນໆ ຕາມກົດໝາຍ ແລະ ລະບຽບການ ທີ່ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ວາງອອກ;

2. ຄົ້ນຫາ, ສະໜອງ ແລະ ຢັ້ງຢືນຂໍ້ມູນຫຼັກຖານການກະທຳຜິດ ຜ່ານສື່ສັງຄົມອອນລາຍ ຕາມການສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ຕິດຕາມ, ກວດກາ ແລະ ລາຍງານ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ຂັດກັບກົດໝາຍ ແລະ ລະບຽບການ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການແກ້ໄຂຕໍ່ໄປ;
4. ຕິດຕາມບັນດາຂ່າວ ທີ່ເປັນທາງສຽງບໍ່ດີໃນສັງຄົມ, ຕອບໂຕ້ຂ່າວປອມ, ຂ່າວປິດເບືອນຄວາມຈິງ ແລະ ການສົ່ງຕໍ່ ຂໍ້ມູນຂ່າວຜິດຕໍ່ກົດໝາຍ ແລະ ລະບຽບການ;
5. ສະໜອງຂໍ້ມູນທີ່ກ່ຽວຂ້ອງ ໃຫ້ຈຸດປະສານງານ ກັບຜູ້ໃຫ້ບໍລິການສື່ສັງຄົມອອນລາຍ ແລະ ແພັດຟອມອື່ນໆ ຢູ່ຕ່າງປະເທດ ໃນການແກ້ໄຂບັນຫາການກະທຳຜິດ ຜ່ານອິນເຕີເນັດ;
6. ໃຫ້ຄຳປຶກສາ ແລະ ແນະນຳ ກ່ຽວກັບ ເຕັກນິກ ຫຼື ວິທີການແກ້ໄຂບັນຫາ ແກ່ຜູ້ຖືກເສຍຫາຍ ຜ່ານສື່ສັງຄົມອອນລາຍ;
7. ປະສານສົມທົບກັບຂະແໜງ ປກຊ-ປກສ ເພື່ອແກ້ໄຂ ການກະທຳຜິດທີ່ເກີດຂຶ້ນ ຜ່ານສື່ສັງຄົມອອນລາຍ;
8. ເກັບກຳ ແລະ ສັງລວມ ນິຕິກຳ ແລະ ມາດຕະຖານ ທັງພາຍໃນ ແລະ ສາກົນ ກ່ຽວກັບ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ, ສື່ສັງຄົມອອນລາຍ ແລະ ແພັດຟອມອື່ນໆ ເພື່ອຄົ້ນຄວ້າສ້າງລະບົບ ແລະ ມາດຕະການ ໃນການວິໄຈຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
9. ສ້າງຮູບພາບ, ວິດີໂອ ແລະ ຄອນເທັນ ທີ່ກ່ຽວກັບ ການນຳໃຊ້ ສື່ສັງຄົມອອນລາຍໃຫ້ປອດໄພ ເພື່ອສັງລວມ ແລະ ເຜີຍແຜ່ໃຫ້ຄວາມຮູ້ຕໍ່ກັບສັງຄົມ;
10. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດກິດຈະກຳ, ຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ໃຫ້ຄວາມຮູ້ ກ່ຽວກັບການນຳໃຊ້ສື່ສັງຄົມອອນລາຍ ໃຫ້ມີຄວາມປອດໄພ;
11. ເກັບກຳ ແລະ ສັງລວມ ສະຖິຕິ ກ່ຽວກັບ ຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສື່ສັງຄົມອອນລາຍ ແລະ ແພັດຟອມອື່ນໆ ຢູ່ພາຍໃນປະເທດ ເພື່ອສະໜອງໃຫ້ພະແນກຄົ້ນຄວ້າ ແລະ ພັດທະນາ ສ້າງປຶ້ມປະຈຳປີ;
12. ປະສານສົມທົບ ກັບ ຄກມດ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ຄຊກມດ ໃນການຈັດຕັ້ງປະຕິບັດວຽກງານ ການປົກປ້ອງເດັກທາງອິນເຕີເນັດໃຫ້ມີຄວາມປອດໄພ;
13. ສະຫຼຸບການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ (ຄຄອຊ) ໃນຂົງເຂດວຽກງານຂອງກົມຄວາມປອດໄພໄຊເບີ ປະຈຳ 02 ຄັ້ງ ຕໍ່ ເດືອນ, 06 ເດືອນ ແລະ ປະຈຳປີ (ກໍລະນີເລັ່ງດ່ວນ ແມ່ນລາຍງານປະຈຳວັນ);
14. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
15. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 12 ໜ້າທີ່ຂອງພະແນກປະຕິບັດການຄວາມປອດໄພໄຊເບີ (Security Operation Center)**

ພະແນກປະຕິບັດການຄວາມປອດໄພໄຊເບີ ມີໜ້າທີ່ດັ່ງນີ້:

1. ນຳໃຊ້ ແລະ ພັດທະນາ ສູນປະຕິບັດການຄວາມປອດໄພໄຊເບີ ແຫ່ງຊາດ ເພື່ອຮັບປະກັນ ການບໍລິການຂອງລັດຖະບານດີຈິຕອນ, ສູນຮັບຝາກເວັບໄຊຂອງລັດຖະບານ, ສູນຂໍ້ມູນພາກເອກະຊົນ, ສູນຂໍ້ມູນພາກລັດ, ສູນຂໍ້ມູນແຫ່ງຊາດ ແລະ ໂຄງລ່າງພື້ນຖານຂໍ້ມູນຂ່າວສານທີ່ສຳຄັນຂອງປະເທດ ທີ່ເອົາລະບົບເຂົ້າມາເຊື່ອມຕໍ່ ໃຫ້ມີຄວາມປອດໄພ;
2. ເຝົ້າລະວັງ, ຕິດຕາມ, ກວດກາ, ວິເຄາະ, ແຈ້ງເຕືອນ ແລະ ລາຍງານ ໄພຄຸກຄາມທາງໄຊເບີ 24/7 ຜ່ານລະບົບເຕັກໂນໂລຊີຕ່າງໆ ປະກອບມີ: ລະບົບໂຄງລ່າງພື້ນຖານຂໍ້ມູນຂ່າວສານທີ່ສຳຄັນຂອງຊາດ (CII), ລະບົບສູນກາງຕິດຕາມຄວາມປອດໄພຂໍ້ມູນຂ່າວສານ (SIEM), ລະບົບກວດກາ ແລະ ຕອບໂຕ້ອຸປະກອນປາຍທາງ (EDR), ລະບົບຕິດຕາມ ແລະ ປ້ອງກັນເວັບໄຊ (WAF), ລະບົບປ້ອງກັນການໂຈມຕີເຄືອຂ່າຍ (NIPS) ແລະ ລະບົບຄວບຄຸມການເຂົ້າເຖິງເຄືອຂ່າຍ (NAC);

3. ເກັບກຳການ ເຂົ້າ-ອອກ ແລະ ຄຸ້ມຄອງອຸປະກອນຂອງ ສູນປະຕິບັດການຄວາມປອດໄພໄຊເບີ ແຫ່ງຊາດ;
4. ຕິດຕາມ, ກວດກາ ແລະ ສັງລວມ ບັນດາອາຍຸການໃຊ້ງານອຸປະກອນ ຮາດແວ ແລະ ຊອບແວ;
5. ສັງລວມລາຍງານສະຖິຕິຊ່ອງໂຫວ່ ແລະ ໄພຄຸກຄາມທີ່ເກີດຂຶ້ນຈາກລະບົບທຸກປະເພດ ເພື່ອສົ່ງໃຫ້ພະແນກສັງລວມ-ຮ່ວມມື ສ້າງປຶ້ມສະຖິຕິປະຈຳປີ;
6. ສັງລວມລາຍງານສະຖິຕິຊ່ອງໂຫວ່ ແລະ ໄພຄຸກຄາມທີ່ເກີດຂຶ້ນຈາກລະບົບ (Security Information Event Management– SIEM);
7. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການຕອບໂຕ້ເຫດການດ້ານຄວາມປອດໄພໄຊເບີ (Incident Response Plan) ທັງພາຍໃນ ແລະ ລະຫວ່າງອົງການ;
8. ດຳເນີນການວິເຄາະຄົ້ນຫາໄພຄຸກຄາມ (Threat Hunting Analysis) ແບບທ່າບຸກ (Proactive) ເພື່ອບົ່ງຊີ້ ແລະ ວິເຄາະໄພຄຸກຄາມທີ່ເຊື່ອງຊ້ອນ ແລະ ຍັງບໍ່ທັນໄດ້ຖືກກວດພົບໂດຍລະບົບອັດຕະໂນມັດ;
9. ວິເຄາະພຶດຕິກຳຜູ້ໃຊ້ ແລະ ອົງປະກອບຂອງລະບົບ (User & Entity Behavior Analytics - UEBA) ເພື່ອກວດການກະທຳທີ່ຜິດປົກກະຕິ;
10. ປະສານງານກັບພະແນກ LaoCERT ໃນການຕອບໂຕ້ເຫດການສຸກເສີນ ແລະ ແລກປ່ຽນຂໍ້ມູນໄພຄຸກຄາມ;
11. ເຂົ້າຮ່ວມ ຝຶກອົບຮົມ, ສຳມະນາ ກ່ຽວກັບ ເຕັກໂນໂລຊີຄວາມປອດໄພ ແລະ ການພັດທະນາຊ໋ອບແວຂອງລະບົບປະຕິບັດການຄວາມປອດໄພໄຊເບີ;
12. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ງວດ ແລະ ປີ;
13. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 13 ຫຼັກການ**

ກົມຄວາມປອດໄພໄຊເບີ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕີກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງ ພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງພັກ-ລັດ;
4. ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 05 ປີ ຂອງກະຊວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;

**ມາດຕາ 14 ແບບແຜນວິທີເຮັດວຽກ**

ກົມຄວາມປອດໄພໄຊເບີມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງສະໜິດແໜ້ນແຟ້ນ ກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພທາງໄຊເບີໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາ ຜົນໄດ້ ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 03 ເດືອນ, 06 ເດືອນ, ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ກະຊວງເປັນປົກກະຕິ;
4. ປະຕິບັດ ການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15 ງົບປະມານ ແລະ ຕາປະທັບ**

ກົມຄວາມປອດໄພໄຊເບີ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງ ທີ່ຂຶ້ນກັບ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 190/ກຕສ, ລົງວັນທີ 02 ກຸມພາ 2022.

ລັດຖະມົນຕີ

ສັນຕິສຸກ ສີມມາລາວົງ